ເພື່ອອອກຂ່າວທັນທີ

# ກອງປະຊຸມສຸດຍອດ ຄມສ ຄັ້ງທີ 3 ແນໃສ່ ສ້າງຄວາມເຂັ້ມແຂງ ໃນການດຳເນີນງານ ແລະ ການຮ່ວມມືກັນ ເພື່ອ ການພັດທະນາທີ່ຍືນຍົງ ໃນອ່າງແມ່ນ້ຳຂອງ

**ນະຄອນຫຼວງວຽງຈັນ, ວັນທີ 29 ມີນາ 2018 -** ໃນອາທິດໜ້ານີ້, ຄະນະກຳມາທິການແມ່ນ້ຳຂອງສາກົນ (ຄມສ) ຈະໄດ້ຈັດຕັ້ງດຳເນີນກອງປະຊຸມສຸດຍອດຄັ້ງທີ 3 ທີ່ ສຽມລຽບ, ຣາຊະອານາຈັກກຳປູເຈຍ. ກອງປະຊຸມສຳຄັນໃນຄັ້ງນີ້ ຈະມີນາຍົກລັດຖະມົນຕີ ຂອງ ຣາຊະອານາຈັກກຳປູເຈຍ, ສປປ ລາວ, ຣາຊະອານາຈັກໄທ ແລະ ສສ ຫວຽດນາມ ກໍຄື ຜູ້ແທນລະດັບສູງຈາກ ສປ ຈີນ ແລະ ມຽນມາ, ແລະ ຄູ່ຮ່ວມເຈຣະຈາ ຂອງ ຄມສ ໃຫ້ກຽດເຂົ້າຮ່ວມ.

ຫົວໜ້າກອງເລຂາ ຄມສ, ທ່ານ ຟາມ ຕວນ ຟານ ໄດ້ກ່າວວ່າ: "ກອງປະຊຸມສຸດຍອດນີ້ ຈະເປັນຄັ້ງທີສາມທີ່ຜູ້ນຳຂອງ ບັນດາປະເທດແມ່ນ້ຳຂອງ ຮ່ວມກັນຢັ້ງຢືນຄືນພາລະບົດບາດ ຂອງ ຄມສ ແລະ ຮ່ວມມືກັນເພື່ອບັນລຸເປົ້າໝາຍສ້າງ ອ່າງແມ່ນ້ຳຂອງ ໃຫ້ ມີຄວາມອຸດົມຮັ່ງມີທາງເສດຖະກິດ, ຄວາມເປັນທຳທາງສັງຄົມ, ແລະ ຍືນຍົງທາງສິ່ງແວດລ້ອມ."

ກອງປະຊຸມສຸດຍອດນີ້ຈະຈັດຂຶ້ນໃນລະຫວ່າງວັນທີ 4 – 5 ເມສາ ແລະ ກ່ອນໜ້ານັ້ນຈະດຳເນີນກອງປະຊຸມສາກົນສອງວັນ. ຄຳຂວັນຂອງກອງປະຊຸມໃນຄັ້ງນີ້ ແມ່ນ, 'ໜຶ່ງແມ່ນ້ຳ, ໜຶ່ງຈິດໃຈ', ທີ່ ສະທ້ອນວັດຖຸປະສົງຕົ້ນຕໍ ເພື່ອການດຳເນີນງານ ແລະ ການຮ່ວມມືກັນເພື່ອການພັດທະນາທີ່ຍືນຍົງໃນອ່າງແມ່ນ້ຳຂອງ. ຄມສ ມີເປົ້າຫມາຍ ແນໃສ່ສ້າງສາຍພົວພັນທີ່ເຂັ້ມແຂງ ລະຫວ່າງ ຄມສ ແລະ ບັນດາປະເທດສະມາຊິກ ແລະ ການຮ່ວມມື ກັບຄູ່ຮ່ວມພັດທະນາ ແລະ ແຜນງານລິເລີ່ມ, ຄູ່ຮ່ວມ ແລະ ຜູ້ມີສ່ວນກ່ຽວຂ້ອງ ຕ່າງໆໃນພາກພື້ນ.

ທ່ານ ຟາມ, ຫົວໜ້າກອງເລຂາ ຄມສ ໄດ້ສະເໜີເພີ່ມຕື່ມວ່າ: "ອີງໃສ່ຄວາມກົດດັນທີ່ຂະຫຍາຍຕົວ - ປະຊາກອນທີ່ເພີ່ມຂຶ້ນ, ການພັດທະນາໂຄງລ່າງພື້ນຖານ, ແລະຜົນກະທົບ ສະພາບອາກາດ - ສິ່ງທີ່ສຳຄັນທີ່ສຸດແມ່ນການນຳໃຊ້ເຫດການດັ່ງກ່າວນີ້ ເພື່ອເປັນໂອກາດໃນການກຳນົດ ບູລິມະສິດຢ່າງຊັດເຈນ. ພວກເຮົາຕ້ອງເຮັດວຽກຮ່ວມກັນ, ຂ້າມຜ່ານຊາຍແດນ ແລະ ຂະແຫນງການ, ເພື່ອຮັບປະກັນການແບ່ງປັນຊັບພະຍາກອນນ້ຳ ແລະ ຜົນປະໂຫຍດທີ່ກ່ຽວຂ້ອງຢ່າງເທົ່າທຽມກັນ."

ນອກຈາກນັ້ນ, ວັດຖຸປະສົງ ຂອງ ກອງປະຊຸມຄັ້ງນີ້ ຍັງແມ່ນການເນັ້ນໜັກຄືນບົດບາດ ຂອງ ຄມສ ໃນການສະໜັບສະໜູນບັນດາປະເທດສະມາຊິກ ໃນການບັນລຸເປົ້າໝາຍການພັດທະນາທີ່ຍືນຍົງ, ໂດຍສະເພາະ, ເປົ້າ ໝາຍທີ 6 ກ່ຽວກັບການຄຸ້ມຄອງນ້ຳທີ່ຍືນຍົງ.

ບາງຂໍ້ມູນລ່າສຸດທີ່ຈະຊ່ວຍຊີ້ແນະໃນການວາງແຜນພັດທະນາໃນອານາຄົດ ແມ່ນສາມາດຫາໄດ້ຈາກ ການສຶກສາກ່ຽວກັບ ການຄຸ້ມຄອງ ແລະ ການພັດທະນາ ແມ່ນ້ຳຂອງ ທີ່ຍືນຍົງ ລວມທັງຜົນກະທົບ ຈາກໂຄງການໄຟຟ້າພະລັງງານນ້ຳຕົກ ໃນລຳນ້ຳຂອງ ຫຼື ຕາມທີ່ຮູ້ກັນວ່າ: ການສຶກສາສະພາມົນຕີ. ການສຶກສາດັ່ງກ່າວ ໄດ້ລາຍງານທ່າແຮງຜົນກະທົບ, ຜົນປະໂຫຍດ, ແລະ ການດຸ່ນດ່ຽງ ຜົນປະໂຫຍດ ທີ່ເຊື່ອມຕໍ່ກັບແຜນການພັດທະນາໃນປະຈຸບັນ ລວມທັງ ໂຄງການພະລັງງານໄຟຟ້າ ນ້ຳຕົກ, ການເດີນເຮືອ, ຊົນລະປະທານ ແລະ ການຄວບຄຸມນ້ຳຖ້ວມ ໃນແມ່ນ້ຳຂອງ ແລະ ສາຂາຕ່າງໆ.

ຜົນຂອງການສຶກສາ ຈະເປັນປະເດັນໜຶ່ງທີ່ຈະມີການປຶກສາຫາລືໃນກອງປະຊຸມສາກົນນີ້. ຂໍ້ຄວາມຫຼັກ ທີ່ໄດ້ຈາກ ການປຶກສາຫາລືດັ່ງກ່າວແມ່ນ ຈະໄດ້ ນຳສະເໜີຕໍ່ ກັບຜູ້ນຳຂອງບັນດາປະເທດ ແມ່ນ້ຳຂອງ ໃນກອງປະຊຸມສຸດຍອດນີ້ ບວກກັບ ຜົນການສຶກສາທີ່ໄດ້ລາຍງານ ກ່ອນໜ້ານັ້ນໃນເດືອນທັນວາ ທ້າຍປີ 2017. ພະນັກງານ ຂອງກອງເລຂາ ຄມສ ຍັງໄດ້ ເຜີຍແຜ່ຜົນການສຶກສາໃຫ້ກັບ ບັນດານັກວິຊາການ, ຫົວໜ້າກົມ, ຂະແໜງການທີ່ກ່ຽວຂ້ອງ ແລະ ຄະນະກຳມະການແມ່ນ້ຳຂອງແຫ່ງຊາດໃນສີ່ປະເທດ.

ຄມສ ຄາດຫວັງ ໃຫ້ກອງປະຊຸມສຸດຍອດໃນຄັ້ງນີ້ ຊ່ວຍສ້າງຄວາມເປັນເອກະພາບ ກ່ຽວກັບ ບົດບາດ ຂອງ ຄມສ ໃນການເປັນສູນຄວາມຮູ້ຫຼັກ ແລະ ກົນໄກການເຈລະຈາບັນຫານ້ຳ ໃນອ່າງແມ່ນ້ຳ. ຄະນະກຳມາທິການ ຍັງກວມລວມໄປເຖິງຂະແໜງການຕ່າງໆ ເພື່ອຕອບສະໜອງຄວາມຕ້ອງການ ທີ່ຫຼາກຫຼາຍ ລວມທັງ ຮັບປະກັນຄວາມ ຍືນຍົງຂອງການປະມົງ, ສົ່ງເສີມການພັດທະນາໄຟຟ້າ ພະລັງງານນ້ຳຕົກທີ່ຍືນຍົງ, ຮັບປະກັນເສລີພາບການເດີນເຮືອ, ປັບປຸງການຄຸ້ມຄອງນ້ຳຖ້ວມ ແລະ ໄພແຫ້ງແລ້ງ ແລະ ຮັກສາລະບົບນິເວດທີ່ສຳຄັນ.

ຜົນສຳເລັດຂອງ ຄມສ ໃນມໍ່ໆມານີ້ ລວມມີ ການຮ່ວມມື, ການສື່ສານ ແລະ ການເຜີຍແຜ່ຂໍ້ມູນທີ່ເຂັ້ມແຂງຂຶ້ນ; ຂະບວນການປຶກສາຫາລືລ່ວງໜ້າ ໄລຍະຫົກເດືອນ ທີ່ໜ້າຊົມເຊີຍ ຂອງ ໂຄງການເຂື່ອນໄຟຟ້າພະລັງງານນ້ຳຕົກປາກແບ່ງ; ການຮັບຮອງຍຸດທະສາດ ການພັດທະນາທົ່ວອ່າງ ແລະ ແຜນດຳເນີນງານການປະມົງ, ການປ່ຽນແປງດິນຟ້າອາກາດ ແລະ ບົດບາດຍິງຊາຍ; ແລະ ການສຳເລັດ ຮ່າງບົດແນະນຳການບັນເທົາຜົນກະທົບທາງສິ່ງແວດລ້ອມ ຂອງ ໄຟຟ້າພະລັງງານນ້ຳຕົກ ແລະ ການປະເມີນຜົນກະທົບສິ່ງແວດລ້ອມຂ້າມຜ່ານຊາຍແດນສະບັບສຸດ ທ້າຍ.

ກອງປະຊຸມສຸດຍອດ ຄມສ ຄັ້ງທີ 3 ທີ່ກຳລັງຈະມາເຖິງນີ້ ແມ່ນ ສືບເນື່ອງມາຈາກ ກອງປະຊຸມສຸດຍອດ ຄັ້ງທຳອິດໃນປີ 2010, ທີ່ ຫົວຫິນ ຣາຊະອານາຈັກໄທ, ແລະ ຄັ້ງທີ 2 ທີ່ ໂຮຈິມິນ ສສ ຫວຽດນາມ. ໃນຂະນະທີ່ກອງປະຊຸມສຸດຍອດ ຄັ້ງທຳອິດ ໄດ້ເຮັດໃຫ້ ກິດຈະກຳ ຂອງ ຄມສ ກ້າວຂຶ້ນສູ່ຍຸກການຮ່ວມມືແບບໃໝ່ ທີ່ຂະຫຍາຍຕົວ, ກອງປະຊຸມ ສຸດຍອດຄັ້ງທີສອງ ໄດ້ ເຮັດໃຫ້ ບັນດາຂະແໜງການທີ່ນຳໃຊ້ນ້ຳ ມີຄວາມຕື່ນຕົວຢ່າງແຂງແຮງ, ເຊັ່ນ ຂະແໜງການກະສິກຳ ແລະ ພະລັງງານ.

ກອງປະຊຸມສຸດຍອດ ຄັ້ງທີ 3 ຈະເປັນການບຸກທະລຸ ໂດຍການອອກຖະແຫລງການສຽມລຽບ, ເຊິ່ງຈະວາງຮາກຖານ ບູລິມະສິດລະດັບສູງ ສຳລັບອີກສີ່ປີຕໍ່ໜ້າ ແລະ ຢັ້ງຢືນຄືນຄວາມຮັບຜິດຊອບຮ່ວມກັນ ຂອງ ບັນດາປະເທດສະມາຊິກ ເພື່ອ ສະພາບແວດລ້ອມທີ່ດີ ແລະ ຄວາມອຸດົມຮັ່ງມີ ໃນອານາຄົດ ຂອງ ອ່າງແມ່ນ້ຳຂອງ.

**ໝາຍເຫດ:**

ຄມສ ແມ່ນ ອົງການຈັດຕັ້ງ ລະຫວ່າງລັດຖະບານ ເພື່ອການປຶກສາຫາລື ແລະ ການຮ່ວມມື ໃນອ່າງແມ່ນ້ຳຂອງ ຕອນລຸ່ມ, ສ້າງຕັ້ງຂຶ້ນໃນປີ 1995 ອີງຕາມສັນຍາແມ່ນ້ຳຂອງ ລະຫວ່າງ ຣາຊະອານາຈັກກຳປູເຈຍ, ສປປ ລາວ, ຣາຊະອານາຈັກໄທ ແລະ ສສ ຫວຽດນາມ. ອົງການດັ່ງກ່າວເປັນກົນໄກລະດັບພາກພື້ນ ເພື່ອ ການຮ່ວມມື ກ່ຽວກັບນ້ຳ ແລະ ທັງເປັນ ສູນກາງຄວາມຮູ້ ການຄຸ້ມຄອງຊັບພະຍາກອນນ້ຳເພື່ອການພັດທະນາ ທີ່ຍືນຍົງ ຂອງ ພາກພື້ນ.

**- ຈົບ -**

**ຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່ :**

ທ່ານ ໂສພຽກ ແມສ໌
ເຈົ້າໜ້າທີ່ ການສື່ສານ
ກອງເລຂາ ຄະນະກຳມາທິການແມ່ນ້ຳຂອງສາກົນ
ອີເມວ: sopheak@mrcmekong.org
ໂທລະສັບ: +856-21-263263, ext. 4607ໂທລະສັບມືຖື : +856-20-77779168